ສະບາຍດີໜູ ນິຣາວັນ,

ຂອບໃຈໃນເຣື່ອງທີ່ຮັບພາຣະຫລາຍແນວ, ນັ້ນແຫລະມີພອນສະຫວັນຫລາຍ! ດີໆໆໆ! ແລະອີກອັນນຶ່ງ ຄຳກອນນັ້ນ ຈັ່ງແມ່ນຄັກຫລາຍເດີ! ອ້າຍໄດ້ນຳໄປອ່ານໃຫ້ບາງຄົນຟັງ ເຂົາວ່າ ເຂົາຈະຫາວິທີຕອບເຈົ້າ ຄືນວ່າຊັ້ນ. ຈັ່ງແມ່ນຈະມ່ວນໄປໜ້ານໍ ປານວ່າໄດ້ຟັງໝໍລຳຄູ່ ຕອບຜຍາກັນນໍ. ຄຳເຖົ້າແກ່ບູຮານເພິ່ນ ວ່າ, "ຈັ່ງຊີ້ແຫລະບຸນບ້ານເຮົາ ຄ່ອຍຫລິ້ນຄ່ອຍກິນ."

ອ້າຍຂຽນມານີ້ ກໍເພື່ອຕອບຄຳຮຽກຮ້ອງຕ້ອງການທີ່ນ້ອງໄດ້ຮ້ອງຂໍໄປເຣື່ອງສະຫລຸບຜົນງານ ແລະຕິຊົມ ເພື່ອຄວາມກ້າວໜ້າໃນອະນາຄົດ.

ການຣີຍູນຽນຊຸດປະຫວັດສາດ: ດີຫລາຍທີ່ສຸດ. ເກີດຄາດໝາຍ, ໂດຍສະເພາະເຈົ້າພາບທ້ອງຖິ່ນໄດ້ແບກ ພາຣະໜັກທີ່ສຸດ, ແຕ່ກໍເຫັນພວກເພິ່ນຊົມຊື່ນຍິນດີທີ່ສຸດອີກດ້ວຍ. ອັນນີ້ພວກເຮົາຄວນຍ້ອງຍໍແທ້ໆ. ບັນດາຜູ້ທີ່ມາຮ່ວມ ກໍໃຫ້ຄວາມຮ່ວມໄມ້ຮ່ວມມືເປັນຢ່າງດີ ແລະຕັ້ງໃຈມາແທ້ໆ. ຜູ້ຊື້ປີ້ຍົນສອງເທື່ອກໍມີ. ແຕ່ລະຄົນທີ່ມາກໍປິ້ມປີຕິຍິນດີ. ຄະນະນຳພາເລີ້ມຕົ້ນ ຄວນພູມໃຈທີ່ໄດ້ພ້ອມໜ້າພຽງຕາກັນຈັດຂຶ້ນ!

ຈຸດທີ່ສົມຄວນແກ້ໄຂໃຫ້ດີຂຶ້ນໃນອະນາຄົດ:

- ພວກເຮົາເປັນເຖິງຂັ້ນປັນຍາຊົນ ບໍ່ຄວນມາຮ່ວມມ່ວນຊື່ນແລ້ວກັບບ້ານເປົ່າໆ. ພວກເຮົາຄວນຫາວິທີ ສືບຕໍ່ພົວພັນ ຈັດຕັ້ງການເບິ່ງແຍງກັນຂຶ້ນ.
- ແຕ່ລະເທື່ອທີ່ພວກເຮົາມາພົບກັນ ພວກເຮົາຄວນຈັດໃຫ້ມີເວລາພິເສດໃນການຊຸມນຸມກັນເວົ້າເຖິງເຣື່ອງນີ້ ໂດຍສະເພາະ.
- ເວລາໂອ້ລົມກັນຫລິ້ນກໍໃຫ້ມີ, ເວລາມ່ວນຊື່ນກໍໃຫ້ມີ ແລະເວລາເວົ້າວຽກກໍໃຫ້ມີຄືກັນ.
- ແມ່ນແທ້, ອ້າຍເອງເຄີຍປາໄສ ແລະເທສນາຫລາຍເທື່ອກັບຊາວຄຣິສຕຽນ ເຂົາກາຍເປັນນິດສັຍແລ້ວ ວ່າ, ເວລາມີຜູ້ເວົ້າ ກໍຕ້ອງມີຜູ້ຟັງ. ໃນລາຍການພວກເຮົາ ຄວນໃຫ້ມີການຟັງນຳດ້ວຍ!
- ໃນເທື່ອໜ້າ ນອກຈາກການຟ້ອນ, ເຕັ້ນລຳມ່ວນຊື່ນແລ້ວ, ໃຫ້ຈັດເວລາໃນການສະແດງຮ້ອງເພງ, ລຳ ຫລືຟ້ອນສີລະປະອີກດ້ວຍ.
- ເຣື່ອງການດື່ມກິນກໍຄືກັນ ແຕ່ລະຄົນຄວນດື່ມໃຫ້ໝົດ. ອັນນີ້ອ້າຍເຫັນຫລາຍໆໆໆໆໆແກ້ວທີ່ຍັງໄຂ ປະໄວ້ ແລະຖິ້ມໄປຊື່ໆ. ໃນເທື່ອໜ້າບໍ່ຄວນຊື້ມາຫລາຍໂພດ.

- ສຳລັບການເບິ່ງແຍງນີ້ ຖ້າຫາກວ່າ ຈະພົວພັນເຖິງເລື່ອງເງິນ, ໜູເອງກໍຮູ້ວ່າ ເມື່ອເວົ້າເຖິງເລື່ອງເງິນແລ້ວ ຄົນເຮົາມັກຈະລະແວງສົງໄສກັນ. ດັ່ງນັ້ນ ອ້າຍວ່າ (ອັນນີ້ເປັນແນວຄິດຊື່ໆເດີ) ບໍ່ຈຳເປັນຈັດຕັ້ງເປັນອົງການເທື່ອ ແຕ່ໃຫ້ເປັນສາຍໄຍພົວພັນກັນ. ສົມມຸດວ່າ ຖ້າມີຜູ້ໃດຜູ້ນຶ່ງປະສົບກັບບັນຫາ ຈະແມ່ນການເຈັບເປັນ ຫລືການລ່ວງລັບໄປກໍຕາມ, ຖ້າຈະມີການຊ່ວຍເຫລືອທາງດ້ານວັດຖຸນັ້ນ ໃຫ້ພວກເຮົາແຈ້ງໃຫ້ກັນຊາບເອົາ ແລະກໍໃຫ້ແລ້ວແຕ່ສັດທາຈະບໍຣິຈາກ ຕາມປັດຈັຍທີ່ໄດ້ຕັ້ງໄວ້ສ່ວນຕົວ. ຖ້າພວກເຮົາຫາກເຮັດແບບແຜ່ປັດຈັຍນີ້ ມັນຈະບໍ່ມີການຂຽນທຳມະນູນອັນໃດຂຶ້ນມາ. ແລະຈະບໍ່ໄດ້ຫຍຸ້ງຍາກນຳດ້ານກົດໝາຍ. ແຕ່ຖ້າຫາກວ່າ ສຽງສ່ວນຫລາຍຢາກເຮັດແນວໃດ, ມີເຫດຜົນພຽງພໍ ອ້າຍກໍສນັບສນູນ. ບໍ່ເປັນພຽງແຕ່ເທົ່ານັ້ນ ເຣື່ອງໂຄງການຢູ່ລາວກໍເຊັ່ນກັນ. ພວກເຮົາບໍ່ຄວນໄປຕົກລົງກັບເຂົາສາກ່ອນ ຈຶ່ງມາຊັກຊວນ ຫລືບອກໝູ່ຄູ່. ພວກເຮົາຄວນພິຈາຣະນາໃຫ້ຄັກຈຶ່ງຕັດສິນໃຈ. ເພາະວ່າເຮົາເຮັດນຳຫລາຍຄົນ. ຜູ້ເວົ້າງ່າຍກໍມີ ແລະຜູ້ເວົ້າຍາກກໍມີ.

- ສຳລັບເຣື່ອງພາສານັ້ນ ຫລັງຈາກພົບປະກັນແລ້ວ ອ້າຍກໍເຫັນດີນຳເຣື່ອງຫລັກໄວຍາກອນ. ດຽວນີ້ ອ້າຍບອກເຈົ້າຕາມຄວາມຈິງ, ຍ້ອນວ່າ ປະເທດລາວເຮົາສ່ວນຫລາຍໄດ້ຂຽນຕາມສຽງເວົ້າ ແລະອ້າຍກໍໄດ້ໃຊ້ວິທີການຂອງພວກເຂົາ ຄືກັນ ເພື່ອວ່າ ຄົນເຂົາຈະອ່ານໄດ້. ແຕ່ໃນຂະນະດຽວກັນ ອ້າຍເອງກໍເຫັນຄວາມສຳຄັນຂອງຫລັກໄວຍາກອນ. ດຽວນີ້ ພາສາລາວເຮົາ ຍັງບໍ່ແນ່ນອນວ່າ ຈະຈັບເອົາກົດອັນໃດ. ແຕ່ເຖິງແມ່ນວ່າ ອ້າຍໄດ້ຂຽນຕາມອອກສຽງກໍຕາມ ອ້າຍກໍຍັງໃຊ້ພາສາທີ່ມີຕົວ ຣ ຢູ່. ຖ້າຫາກວ່າ ພວກເຮົາມີໂອກາດສຳມະນາກັນໃນເຣື່ອງນີ້ ບາງທີ ອາດຈະເປັນວິທີນຶ່ງທີ່ພວກເຮົາຈະຊ່ວຍພາສາລາວເຮົາໃຫ້ຄົງຢູ່ໃນສະພາບມາດຕະຖານໄດ້. ອ້າຍເຫັນພ້ອມທີ່ຈະຮ່ວມໃນການສຳມະນາ ສຶກສາໃນເຣື່ອງນີ້.

ດຽວນີ້ມີພຽງແຕ່ເທົ່ານີ້, ບາງທີຄຶດອອກອີກ ອາດຈະສົ່ງມາໃໝ່ອີກ.

ຂອບໃຈ,

ອິນທະຫວາ ອິນທິສານ